**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ ເລກທີ 0822 /ຫອຄ

ນະຄອນຫຼວງວຽງຈັນ, ວັນທີ 22 ເມສາ 2025

# ແຈ້ງການ

**ເຖິງ:** - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ.
- ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ.
- ບໍລິສັດທີ່ດຳເນີນກິດຈະການນຳເຂົ້າ ແລະ ສົ່ງອອກສິນຄ້າ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ປັດປັບປຸງລະບົບການລົງທະບຽນ ແລະ ຄຸ້ມຄອງຖານຂໍ້ມູນຜູ້ນຳເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 2072/ອຄ.ກຈພງ, ລົງວັນທີ 15 ພະຈິກ 2023;
- ອີງໃສ່ ແຈ້ງການສືບຕໍ່ອາຍຸໃບຢັ້ງຢືນການລົງທະບຽນຜູ້ນຳເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ ສະບັບ ເລກທີ 1284/ກຄຕ, ລົງວັນທີ 13 ມິນາ 2025.

ເພື່ອເປັນການປັບປຸງລະບົບລົງທະບຽນ ແລະ ຄຸ້ມຄອງຖານຂໍ້ມູນຜູ້ນຳເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ ໃຫ້ມີຄວາມສະຖຽນ, ການກວດຄືນຂໍ້ມູນຂອງໃບຢັ້ງຢືນການລົງທະບຽນຜູ້ນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ ຂອງບັນດາບໍລິສັດ ເພື່ອສັງລວມຂໍ້ມູນໃຫ້ກະຊວງການເງິນ ແລະ ທະນາຄານ ແຫ່ງ ສປປ ລາວ. ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງອອກແຈ້ງການດັ່ງນີ້:

1. ໂຈະຊົ່ວຄາວ ການຮັບຄຳຮ້ອງລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກ ໃໝ່ ນັບແຕ່ວັນທີ 22 ເມສາ 2025 ເປັນຕົ້ນໄປ.
2. ສຳລັບຄຳຮ້ອງຂໍລົງທະບຽນທີ່ໄດ້ຍື່ນເຂົ້າມາໃນລະບົບກ່ອນວັນທີ 22 ເມສາ 2025, ໂດຍສະເພາະກິດຈະການທີ່ຕິດພັນກັບການສົ່ງອອກສິນຄ້າ ຊຶ່ງໄດ້ມີສັນຍາຮ່ວມກັນກັບ ລັດຖະບານ ຫຼື ຜູ້ຄ້າຢູ່ຕ່າງປະເທດ ກົມການຄ້າຕ່າງປະເທດຈະສືບຕໍ່ແກ້ໄຂໃຫ້ເປັນແຕ່ລະກໍລະນີໄປ.
3. ມອບໃຫ້ ກົມການຄ້າຕ່າງປະເທດ ເປັນເຈົ້າການກຳນົດເງື່ອນໄຂການຈັດຕັ້ງປະຕິບັດໃຫ້ເປັນເອກະພາບ ແລະ ສົມທົບພາກສ່ວນກ່ຽວຂ້ອງ ເຜີຍແຜ່ແຈ້ງການສະບັບນີ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ເປັນບ່ອນອີງຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

**ຫົວໜ້າຫ້ອງການ**

ປອ. ບົວວັນ ວິລະວົງ

**ບ່ອນສົ່ງ:**

- ກົມການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ
- ກົມພາສີ, ກະຊວງການເງິນ
- ກົມຄຸ້ມຄອງເງິນຕາຕ່າງປະເທດ, ທະນາຄານ ແຫ່ງ ສປປ ລາວ